Office of
Governor Tim Walz
Lt. Governor Peggy Flanagan

COVID-19 Response and Preparation

# COVID-19 ການຕອບສະໜອງ ແລະຕຽມພ້ອມ

ຜູ້ວ່າການລັດ ທິມ ວອລສ໌

- “ ຂ້າພະເຈົ້າຕ້ອງການເນັ້ນໜັກ ຂ່າວສານທີ່ສຳຄັນອີກອັນໜຶ່ງ ຕໍ່ຄົນມິນນີໂຊຕາທັງໝົດ. ຄົນມິນນີໂຊຕາ ຊາວເອເຊັຽແປຊີຟິກ ໄອແລນເດີ (API) ຂອງພວກເຮົາແມ່ນປະສົບກັບອັດຕາການຈຳແນກທີ່ສູງ, ຄຳເວົ້າທີ່ກຽດຊັງ, ແລະການປະພຶດທີ່ບໍ່ເຄົາລົບນັບຖື ຍ້ອນໂລກລະບາດທີ່ພວກເຮົາກຳລັງປະສົບຢູ່.”
- ຂ້າພະເຈົ້າຕ້ອງການຈະແຈ້ງ. ຊາວເອເຊັຽແປຊີຟິກ ໄອແລນເດີ (API) ຊຸມຊົນໃນລັດມິນນີໂຊຕາແມ່ນເປັນສ່ວນນື່ງສຳຄັນໃນການທຳຄວາມເຂົ້າໃຈກັບທຸກສິ່ງທີ່ພວກເຮົາເຮັດ.”
- ພວກເຮົາໃນນາມ ຊາວມິນນີໂຊຕາ ໃນທົ່ວລັດ ຈະບໍ່ຍອມຮັບເອົາການຈຳແນກ, ການແບ່ງແຍກເຊື້ອຊາດ, ຫຼືຄວາມບໍ່ເຄົາລົບຂອງເພື່ອນບ້ານ ຊາວເອເຊັຽແປຊີຟິກ ໄອແລນເດີຂອງພວກເຮົາດຽວນີ້ຫລືທຸກເວລາ. ເປັນທີ່ຍອມຮັບບໍ່ໄດ້ ທີ່ຈະກ່ຽວຂ້ອງກັບຄວາມຢ້ານກົວທີ່ເຮົາທຸກຄົນມີຕໍ່ກັບການແຜ່ລະບາດຄັ້ງນີ້ກັບກຸ່ມບຸກຄົນໃດໆ ແລະປະຕິບັດຕໍ່ບຸກຄົນເຫຼົ່ານັ້ນທີ່ແຕກຕ່າງກັນ”
- "ໄວຣັດ ບໍ່ຈຳແນກ, ແລະພວກເຮົາກໍ່ບໍ່ຄວນເຮັດ."
- “ ຖ້າຊາວມິນນີໂຊຕາ ຄົນໃດຕົກເປັນເຫຍື່ອຂອງອາຊະຍາກຳ ທີ່ໜ້າກຽດຊັງຍ້ອນຄວາມຢ້ານກົວອ້ອມຮອບ COVID-19, ພວກເຂົາຄວນຕິດຕໍ່ກັບໜ່ວຍງານບັງຄັບໃຊ້ກົດໝາຍ.”
- “ ຖ້າຜູ້ໃດຜູ້ໜຶ່ງ ປະສົບກັບ ການຈຳແນກໃນທີ່ເຮັດວຽກ, ທີ່ຢູ່ອາໃສ, ຫຼືໃນສະຖານທີ່ສາທາລະນະ ຍ້ອນ COVID-19, ພວກເຂົາຄວນຕິດຕໍ່ຫາພະແນກສິດທິມະນຸດຂອງລັດ ມິນນີໂຊຕາ. "
- “ ພະນັກງານຂອງຂ້າພະເຈົ້າ ພ້ອມດ້ວຍພະແນກຄວາມປອດໄພສາທາລະນະ, ພະແນກສິດທິມະນຸດ, ແລະຫ້ອງການໄອຍະການສູງສຸດໄດ້ຮັບ ແລະຈະສືບຕໍ່ເຮັດວຽກຮ່ວມກັບຫົວໜ້າຜູ້ນຳຊຸມຊົນແລະຜູ້ນຳກົດໝາຍຂອງ ຊາວເອເຊັຽແປຊີຟິກ ໄອແລນເດີ ເພື່ອຟັງຄວາມກັງວົນແລະຊອກຫາກົນລະຍຸດເພື່ອແກ້ໄຂຄວາມກັງວົນນີ້.”

ພະແນກສິດທິມະນຸດຂອງລັດ ມິນນີໂຊຕ້າ ຕິດຕໍ່: 651-539-1133 ຫຼື info. MDHR@state.mn.us